ໃນວັນທີ 03 ກໍລະກົດ 2024 ໄດ້ຈັດກອງປະຊຸມປະທານ ແລະ ປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກ ສາຫາລືກັບ ຄູ່ຮ່ວມພັດທະນາ (SWGs) ຂຶ້ນ ທີ່ ໂຮງແຮມລາວພລາຊ່າ, ນະຄອນຫຼວງວຽງຈັນ ພາຍໃຕ້ ການເປັນປະທານຂອງ ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ແລະ ປະທານຮ່ວມ ທ່ານ ບັກໂດເດັຍ ເບີຄະນ໋ອຟ (Mr. Bakbodir Burkhanov) ຜູ້ປະສານງານ ອົງການສະຫະ ປະຊາຊາດ ປະຈຳ ສປປ ລາວ. ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປຶກສາຫາລື ກ່ຽວກັບຄວາມຄືບໜ້າໃນ ການຈັດຕັ້ງປະຕິ ບັດວຽກງານຂະບວນການໂຕະມົນ ເປັນຕົ້ນແມ່ນ ຄວາມຄືບໜ້າຂອງໜ່ວຍງານຂະແໜງການ ໃນ ການຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2023 ລວມທັງ ຮ່າງເບື້ອງຕົ້ນຂອງ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ 10 (2021-2025) ແລະຮ່າງແນວຄວາມຄິດຂອງ ກອງປະຊຸມໂຕະມົນ ປະຈຳປີ 2024 ເຊິ່ງຄາດວ່າຈະຈັດໃນຕົ້ນເດືອນ ພະຈິກ 2024 ນີ້. ໂດຍມີບັນດາ ທ່ານຮອງລັດຖະມົນຕີ ຜູ້ຊີ້ນຳໜ່ ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ໃນນາມປະທານ 10 ໜ່ວຍງານຂະແໜງການ, ຫົວໜ້ າຫ້ອງ ການ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ, ຄະນະພະແນກ ໃນນາມຫົວໜ້າ ແລະກອງ ເລຂາໜ່ວຍງານຂະແໜງການ ເຂົ້າຮ່ວມຫຼາຍກວ່າ 80 ທ່ານ. ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດອົບອຸ່ນຟົດຟື້ນ , ມີການແລກປ່ຽນຄຳຄິດເຫັນຢ່າງມີສີສັນ ແລະກົງໄປກົງມາ ເຊິ່ງສາມາດສະຫລຸບຕີລາຄາບັນດາຄຳເຫັນຂອງ ບັນດາ ກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ ໄດ້ດັ່ງນີ້:

## I. <u>ເນື້ອໃນຂອງກອງປະຊຸມ:</u>

ກອງປະຊຸມໄດ້ດຳເນີນເປັນເວລາ ເຄິ່ງວັນ, ໄດ້ນຳສະເໜີ ແລະປຶກສາຫາລື: (1) ຂະບວນການ ແລະກຳນົດເວລາຂອງ ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງ ທີ X (2026-2030); (2) ຄວາມຄືບໜ້າໃນການ ຈັດຕັ້ງປະຕິບັດຂະບວນການໂຕະມົນ ປະຈຳປີ 2024; ແລະ (3) ຮ່າງແນວຄວາມຄິດການຈັດກອງປະຊຸມໂຕະມົນ ປະຈຳປີ 2024.

## II. <u>ຜົນຂອງກອງປະຊຸມ</u>

1. ຂະບວນການ ແລະກຳນົດເວລາຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X (2026-2030);

   - ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ IX ແລະຮ່າງແຜນ ພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X ສ. ອາເມລິກາ ກໍ່ໄດ້ສະໜອງທຶນຕື່ມໂດຍ ຜ່ານໂຄງການ ການວາງແຜນ ແລະການເງິນ ແຫ່ງຊາດ ເພື່ອການພັດທະນາແບບມີສ່ວນຮ່ວມ (NPFID), ການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ ເພື່ອສ້າງຄວາມອາດສາມາດໃນ ການປະຕິບັດ ແລະໄດ້ມີອົງການພັດທະນາສາກົນຂອງ ສ.ອາເມລິກາ (USAID) ເຂົ້າຮ່ວມລົງ ເລິກໃນການຈັດຕັ້ງປະຕິບັດວຽກງານຕົວຈິງ;
   - ສະເໜີໃຫ້ລະບຸເຂົ້າໃນ ແຜນພັດທະນາເສກຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X ກ່ຽວກັບ ການຫັນປ່ຽນເສດຖະກິດ ທີ່ມີຄວາມຫຼາກຫຼາຍ ແລະການສ້າງເສດຖະກິດນະວັດຕະກຳໃໝ່ ລວມທັງ ວຽກງານທີ່ຕິດພັນກັບການເກັບກູ້ລະເບີດ ໂດຍສະເພາະການສຳຫຼວດ ແລະກວດກູ້ ທີ່ ສອດຄ່ອງກັບບູລິມະສິດແຫ່ງຊາດ ແລະຜົນການປະເມີນກາງສະໄໝຂອງແຜນ IX;
   - ແນວຄວາມຄິດ ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X ແມ່ນຖື ວ່າຄົບຖ້ວນ ແຕ່ຍັງມີບາງຂົງເຂດ ເຊັ່ນ: ການສ້າງສະພາບເສດຖະກິດທີ່ສົມເຫດສົມຜົນກັບ ຄວາມເປັນຈິງ ແລະສະພາບການເງິນໃນປະຈຸບັນ, ການເຊື່ອມໂຍງແຜນ X ເຂົ້າໃນການວຽກງານ ການເງິນ ພາຍໃຕ້ການປະຕິບັດຍຸດທະສາດການເງິນ ແລະການສະໜອງທຶນ ໃນການຈັດຕັ້ງປະຕິ

ບັດແຜນ X ບໍ່ວ່າຈະເປັນທຶນພາຍໃນ, ພາກພື້ນ ແລະສາກົນ ລ້ວນແລ້ວແຕ່ມີຄວາມສຳຄັນ ແລະ ຈຳເປັນ ສະນັ້ນ, ຄວນຕ້ອງວິເຄາະ-ວິໄຈ ຜົນດີ ແລະຜົນເສຍຢ່າງຮອບຄອບ-ຄວບຄຸມ;

- ໃນການຈັດຕັ້ງປະຕິບັດຍຸດທະສາດດ້ານການເງິນ ທະນາຄານພັດທະນາອາຊີ ຈະໃຫ້ການສະໜັບສະໜູນ ໃນການເຂົ້າເຖິງແຫຼ່ງທຶນຊ່ວຍເຫຼືອລ້າ ເຖິງແມ່ນວ່າການຊ່ວຍເຫຼືອລ້າຈະມີທ່າອ່ຽງທີ່ຈຳກັດ ຫຼັງຈາກ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາກໍ່ຕາມ;
- ບັນດາກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ (ໃນນາມປະທານ ແລະປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ ຮ່ວມພັດທະນາ ໄດ້ເຮັດຮ່ວມກັນຢ່າງໃກ້ຊິດ ແລະມີບາງໜ່ວຍງານໄດ້ສົ່ງຄຳເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X ເປັນທີ່ຮຽບຮ້ອຍແລ້ວ.

2. ຄວາມຄືບໜ້າໃນການ ຈັດຕັ້ງປະຕິບັດຂະບວນການໂຕະມົນ ປະຈຳປີ 2024

- ບົດແນະນຳການຈັດຕັ້ງປະຕິບັດ ຂະບວນການໂຕະມົນ ກໍ່ໄດ້ລະບຸຈະແຈ້ງ ເພື່ອຊຸກຍູ້ໃຫ້ກອງເລຂາ ສ້າງ ແລະຈັດຕັ້ງປະຕິບັດແຜນບູລິມະສິດຂອງຂະແໜງການ ເພື່ອປະກອບສ່ວນ ແລະມີສ່ວນຮ່ວມຫຼາຍຂຶ້ນ ຕໍ່ຜົນໄດ້ຮັບຂອງແຜນພັດທະນາແຫ່ງຊາດ;
- ເພື່ອຍົກສູງຄວາມອາດສາມາດ ແລະປະສິດທິຜົນ ໃນການປະສານງານວຽກຂະບວນການໂຕະມົນ ສະເໜີໃຫ້ ປັບປຸງບັນລີລາຍຊື່ ລວມທັງ ຂໍ້ມູນການຕິດຕໍ່ປະສານງານ (ເບີໂທ, ອີເມວສ໌ ແລະອື່ນໆ) ຢ່າງເປັນປົກກະຕິ;
- ກົນໄກການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ RTP ແມ່ນເປັນພື້ນຖານອັນດີ ໃນການຍົກສູງພາລະບົດບາດ ໜ່ວຍງານຂະແໜງການ SWG ແລະຮັບປະກັນການປະກອບສ່ວນຢ່າງມີປະສິດທິຜົນ ເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນບຸລິມະສິດ ໃນໄລຍະທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ IX ແລະການກະກຽມສ້າງແຜນ 5ປີ ຄັ້ງທີ່ X ເຊິ່ງອີງການ ສປຊ ເພື່ອການພັດທະນາ ສະເໜີໃຫ້ເອົາໃຈໃສ່ ດັ່ງນີ້:
  1) ສຸມໃສ່ຜົນໄດ້ຮັບເບື້ອງຕົ້ນ: ຊຸກຍູ້ໃຫ້ກອງເລຂາຂະບວນການໂຕະມົນ RTP ສ້າງກົນໄກທີ່ຮັດກຸມຫຼາຍຂຶ້ນ ເພື່ອແນະນຳບັນດາຂະແໜງການ (SWGs) ໃນການສ້າງ ແລະຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ ໃຫ້ສອດຄ່ອງກັບບຸລິມະສິດແຫ່ງຊາດ ທີ່ໄດ້ລະບຸໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ( NSEDPs);
  2) ຫຼີກເວັ້ນການເຮັດວຽກ ທີ່ກະແຈກກະຈາຍ: ຫຼຸດຜ່ອນຄວາມສ່ຽງຂອງໜ່ວຍງານຂະແໜງການ SWGs ໂດຍການປະກອບສ່ວນຢ່າງມີຈຸດສຸມ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ໂດຍສະເພາະໃນໄລຍະການສ້າງ ແລະການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ IX, ເພື່ອຮັບປະກັນຄວາມສອດຄ່ອງ ແລະໄປໃນທິດທາງດຽວກັນ;
  3) ການປະຕິບັດຄຳແນະນຳຂະບວນການໂຕະມົນ: ສະແດງຄວາມຊົມເຊີຍ ຕໍ່ຄຳແນະນຳຂະບວນການໂຕະມົນ RTP ທີ່ໄດ້ເຜີຍແຜ່ໃຫ້ແກ່ໜ່ວຍງານຂະແໜງການ ແລະຄູ່ຮ່ວມພັດທະນາ ເພື່ອນຳໃຊ້. ອີງໃສ່ສະພາບຕົວຈິງ ໃນປັດຈຸບັນຕ້ອງໄດ້ຮັບການປະຕິບັດຢ່າງມີປະສິດທິພາບ ໂດຍສຸມໃສ່ການບັນລຸຜົນໄດ້ຮັບທີ່ຊັດເຈນ ແລະເສີມຂະຫຍາຍການປະກອບສ່ວນຂອງໜ່ວຍງານຂະແໜງການ SWGs ໃນຂະບວນການວາງແຜນແຫ່ງຊາດ ຢ່າງມີຄຸນນະພາບ;

4) ການປັບປຸງການປະສານງານ: ເພື່ອຮັບປະກັນຄວາມເປັນເອກະພາບ ແລະສອດຄ່ອງກັບກອບການວາງແຜນພັດທະນາແຫ່ງຊາດ, ຍັງຈຳເປັນຕ້ອງມີການປະສານງານ ຢ່າງມີປະສິດທິຜົນ ລະຫວ່າງ ບັນດາໜ່ວຍງານທີ່ຮັບຜິດຊອບຂະບວນການວາງແຜນ ແລະກົນໄກຂະບວນການໂຕະມົນ RTP, ສຳຄັນ ແມ່ນຮັດແໜ້ນການຮ່ວມມື ລະຫວ່າງ ກະຊວງແຜນການ ແລະການລົງທຶນ ກັບ ໜ່ວຍງານຂະແໜງການ, ທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ.

- ສະຫະພາບເອີຣົບ ໃນນາມເປັນປະທານຮ່ວມຂອງໜ່ວຍງານຂະແໜງການກະສິກຳ ແລະພັດທະນາຊົນນະບົດ SWG, ຈະໃຫ້ການສະໜັບສະໜູນໜ່ວຍງານຂະແໜງການ SWG ຕື່ມອີກ 3 ໂຄງການ ເຊິ່ງຖືວ່າມີບົດບາດສຳຄັນ 03 ໂຄງການດັ່ງກ່າວນີ້ ຈະສຸມໃສ່ເພີ່ມທະວີການຜະລິດກະສິກຳ, ປັບປຸງພື້ນຖານໂຄງລ່າງທາງຄົມມະນາຄົມ, ແລະຊຸກຍູ້ການພັດທະນາແບບຍືນຍົງໃນຊຸມຊົນ; ນອກຈາກນັ້ນ, ສະເໜີໃຫ້ປະຕິບັດລະບົບການໝູນວຽນປະທານຮ່ວມ ເພື່ອນຳເອົາທັດສະນະ ແລະແນວຄວາມຄິດໃໝ່ໆ ມາຈັດຕັ້ງປະຕິບັດ;
- ຄວນມີກົນໄກການພົບປະ ລະຫວ່າງ ໜ່ວຍງານຂະແໜງການຕ່າງໆ ເພື່ອເພີ່ມທະວີການຮ່ວມມື ແລະປະສານງານຂອງທັງ 10 ໜ່ວຍງານຂະແໜງການ ເຊິ່ງກົນໄກດັ່ງກ່າວນີ້ ຈະຊ່ວຍໃຫ້ພວກເຮົານຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ, ຫຼຸດຜ່ອນຄວາມສ່ຽງໃນການຈັດຕັ້ງປະຕິບັດວຽກງານ ແລະຫຼີກລ່ຽງການປະຕິບັດວຽກງານທີ່ທັບຊ້ອນກັນ.

3. ຮ່າງແນວຄວາມຄິດການຈັດກອງປະຊຸມໂຕະມົນ ປະຈຳປີ 2024

- ສະໜັບສະໜູນໃຫ້ພາກສ່ວນຈັດຕັ້ງທາງສັງຄົມ, ພາກເອກະຊົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເຂົ້າຮ່ວມ ແລະມີສ່ວນຮ່ວມໃນການແລກປ່ຽນ ໂດຍສະເພາະການປ່ຽນແປງທີ່ດີ ແລະການປະກອບສ່ວນທີ່ຫຼາກຫຼາຍ ຕາມທິດທາງແຜນພັດທະນາ ແລະຍຸດທະສາດອື່ນໆ;
- ໃນຂະບວນການຈັດກອງປະຊຸມໂຕະມົນ 2024 ຄວນມີຫົວຂໍ້ເປັນສະເພາະໃນການປຶກສາຫາລື ແລະມີການກຳນົດແນວທາງໃນການແກ້ໄຂສິ່ງທ້າທາຍໃນຫົວຂໍ້ນັ້ນ ໃຫ້ຫຼາຍກວ່າທີ່ຈະນຳສະເໜີ ຫຼື ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄັ້ງຜ່ານມາ;
- ຂະບວນການໂຕະມົນ 2024 ອາດຈະບໍ່ແມ່ນກອງປະຊຸມລະດັບສູງ ແຕ່ມີຄວາມໝາຍຄວາມສາຄັນ ເຊິ່ງເປັນໂຄງສຸດທ້າຍ ໃນການປຶກສາຫາລື ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ X ສະນັ້ນ, ຕ້ອງໄດ້ເປີດກ້ວາງ ແລະເພີ່ມເວລາ ໃນການປຶກສາຫາລືຫົວຂໍ້ດັ່ງກ່າວ;

ນອກຈາກນີ້, ທ່ານຮອງລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້ ກໍ່ໄດ້ປະກອບຄຳເຫັນ ກ່ຽວກັບວຽກງານທີ່ຕິດພັນກັບຂະແໜງການກະສິກຳ ແລະພັດທະນາຊົນນະບົດ ເຊິ່ງມີລາຍລະອຽດດັ່ງນີ້:

- ກົນໄກຂະບວນການໂຕະມົນ ໄດ້ຊ່ວຍສະໜັບສະນູນການຈັດຕັ້ງປະຕິບັດວຽກງານຂອງ ຂະແໜງການໃຫ້ມີປະສິດທິພາບຫຼາຍຂຶ້ນ ໂດຍສະເພາະຂອດການປະສານງານ ລະຫວ່າງ ກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ;
- ໄດ້ຜັນຂະຫຍາຍ 4 ກອບວຽກສຳຄັນ ຕາມທິດຊີ້ນຳຜັນຂະຫຍາຍຜົນ ກອງປະຊຸມໂຕະມົນ ປະຈຳປີ 2023 ເຊັ່ນ: ການຜະລິດກະສິກາເປັນສິນຄ້າ/ທຸລະກິດກະສິກາ; ການບັງຄັບໃຊ້ລະບຽບການ, ການຄຸ້ມຄອງ ແລະປົກປັກຮັກສາຊັບພະຍາກອນປ່າໄມ້; ການລົງທຶນ, ການນຳໃຊ້ນະວັດຕະກຳ ແລະເຕັກໂນໂລຊີເຂົ້າໃນການເຮັດວຽກກະສິກຳທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະການເພີ້ມການລົງທຶນ ໃນ

ການພັດທະນາຄວາມອາດສາມາດ ດ້ານກະສິກຳ ໃຫ້ແກ່ພະນັກງານລັດ, ຜູ້ປະກອບການຂະໜາດນ້ອຍ, ຊາວກະສິກອນ, ການເຂົ້າເຖິງໂຄງລ່າງພື້ນຖານ ແລະການຄຸ້ມຄອງຊັບພະຍາກອນທຳມະຊາດ;

- ນອກຈາກນີ້, ຂະແໜງການກະສິກຳ ໄດ້ຈັດຕັ້ງປະຕິບັດໜ້າວຽກຂອງຕົນຢ່າງມີປະສິດທິຜົນສູງ ໂດຍສະເພາະນະໂຍບາຍຕ່າງໆທີ່ຕິດພັນກັບ ຂະແໜງການຍ່ອຍ ເຊັ່ນ: ການສ້າງນະໂຍບາຍການຫັນປ່ຽນດ້ານກະຊິກຳຂອງ ຂະແໜງການຍ່ອຍນິເວດກະສິກຳ; ການສ້າງຄູຝຶກ ແລະການສ້າງວຽກເຮັດງານທຳໃຫ້ແກ່ໄວໜຸ່ມ ຢູ່ເຂດຊົນນະບົດ ຂອງໜ່ວຍງານຂະແໜງການຍ່ອຍ ຊາວກະສິກອນ ແລະທຸລະກິດກະສິກຳ; ການກຳນົດພື້ນທີ່ການຜະລິດ ເພື່ອປົກປ້ອງໄຟປ່າ, ການທ່ອງທ່ຽວທາງທຳມະຊາດ ແລະສິນເຊື່ອກາກບ່ອນ ຂອງຂະແໜງການຍ່ອຍປ່າໄມ້; ການຈັດຕັ້ງປະຕິະບັດຍຸດທະສາດ ການຄຸ້ມຄອງ-ນຳໃຊ້ ແລະການສ້າງເສດຖະກິດຈາກຊີວະນາໆພັນ ຂອງຂະແໜງການຍ່ອຍກະສິກຳຊີວະນາໆພັນ; ການພັດທະນາລະບົບຊົນລະປະທານ ເພື່ອສ້າງຄວາມທົນທານຕໍ່ການປ່ຽວນແປງດິນຟ້າອາກາດຂອງ ຂະແໜງການຍ່ອຍ ຊົນລະປະທານ ແລະ; ການປະຕິບັດຄາດໝາຍສູ້ຊົນໃນການພັດທະນາຊົນນະບົດ ຂອງຂະແໜງການຍ່ອຍພັດທະນາຊົນນະບົດ.

## III. ທິດທາງໃນຕໍ່ໜ້າ

1. ໃຫ້ກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ ຈັດຕັ້ງປະຕິບັດບັນດາໜ້າວຽກຂອງໜ່ວຍງານຂະແໜງ ການປຶກສາຫາລືກັບ ຄູ່ຮ່ວມພັດທະນາ ທີ່ໄດ້ລະບຸໄວ້ໃນແຜນວຽກບູລິມະສິດ ພ້ອມທັງ ລາຍງານຄວາມຄືບໜ້າໃຫ້ແກ່ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ໃນນາມກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເພື່ອສັງລວມ ແລະສ້າງເປັນລາຍງານ ເພື່ອຮັບໃຊ້ໃນກອງປະຊຸມໂຕະມົນ;
2. ຍົກສູງກົນໄກການເຮັດວຽກຮ່ວມກັນຢ່າງຕັ້ງໜ້າ ລະຫວ່າງ ລັດຖະບານ ແລະຄູ່ຮ່ວມພັດທະນາ ພ້ອມທັງ ຍົກລະດັບຄວາມອາດສາມາດການຈັດຕັ້ງປະຕິບັດ ບັນດາໜ້າຂອບວຽກຂອງໜ່ວຍງານຂະແໜງການປຶກສາຫາລືກັບ ຄູ່ຮ່ວມພັດທະນາ.
3. ສະໜອງຂໍ້ມູນທີ່ຖືກຮັບຮອງຢູ່ໃນກອງປະຊຸມປຶກສາຫາລືໃນລະດັບຕ່າງໆ ແລະສະຫຼູບສັງລວມບັນຫາພົ້ນເດັ່ນ ໂດຍສະເພາະການຮັບຮອງບົດລາຍງານປະ ຈຳປີ 2023 ແລະແຜນ 2024 ລົງໃນ ເວບໄຊສ໌ຂະບວນການໂຕະມົນ;
4. ເອົາໃຈໃສ່ແກ້ໄຂວຽກງານປົນອ້ອມທີ່ເຄັ່ງຮ້ອນຂອງ ສປປ ລາວ ແລະສາກົນ ທີ່ກຳລັງປະເຊີນຢູ່ ເຊັ່ນ: ການປ່ຽນແປງດິນຟ້າອາກາດ, ການຟື້ນຟູເສດຖະກິດ, ຍຸດທະສາດການເງິນ, ການສົ່ງເສີມການນຳໃຊ້ພະລັງງານສະອາດ ແລະວຽກງານອື່ນໆ ພ້ອມທັງ, ປັບປຸງໂຄງຮ່າງການຈັດຕັ້ງຄືນໃໝ່ ໂດຍສະເພາະການສ້າງຕັ້ງຂະແໜງການຍ່ອຍທີ່ຕິດພັນກັບວຽກງານພະລັງງານ ແລະວຽກງານອື່ນຂຶ້ນໂດຍໄວ;
5. ຂະແໜງການທີ່ຍັງບໍ່ໄດ້ຈັດກອງປະຊຸມ ໃຫ້ຮີບຮ້ອນຈັດກອງປະຊຸມ ຂັ້ນຄະນະນຳ 1 ຄັ້ງ/ປີ, ຂັ້ນວິຊາການ 2 ຄັ້ງ/ປີ ຫຼື ຫຼາຍກວ່ານັ້ນ ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ ລວມທັງ, ມີການຕິດຕາມກວດກາ ແລະຊີ້ນຳຢ່າງໃກ້ຊິດ ເພື່ອຮັບປະກັນການຈັດຕັ້ງປະຕິບັດຂອງໜ່ວຍງານຂະແໜງການ ໃຫ້ບັນລຸຕາມແຜນທີ່ວາງໄວ້;
6. ໃຫ້ສືບຕໍ່ປຶກສາຫາລືຢ່າງເປັນປົກກະຕິ ລະຫວ່າງ ກະຊວງຂະແໜງການ ແລະ ຄູ່ຮ່ວມພັດທະນາ ເພື່ອຮັບປະກັນ ການປະກອບສ່ວນອັນສຳຄັນຕໍ່ວຽກງານການພັດທະນາໃນ ສປປ ລາວ. ພ້ອມດຽວກັນນີ້, ໃຫ້ແລກປ່ຽນບົດຮຽນທີ່ພົບພໍ້ໃນໄລຍະຜ່ານມາ ເພື່ອຫຼຸດຜ່ອນຄວາມສ່ຽງ, ໜ່ວຍງານຂະແໜງການຕ້ອງເປັນເວທີສົນທະນາແລກປ່ຽນທັດສະນະຄະຕິ, ເປັນເວທີນຳສະເໜີຄວາມຕ້ອງການ ໃນການຂໍການສະໜັບສະໜູນຈາກຜູ້ໃຫ້ທຶນ ແລະເປັນເວທີດ້ານວິຊາການໃນການ ຄົ້ນຄວ້າລາຍລະອຽດຂອງແຕ່

ລະອຽກງານ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ວຽກງານຂະບວນການໂຕະມົນ ກໍ່ຄືແຜນພັດທະນາແຫ່ງຊາດ.